ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະປະຈຳພັກແຂວງວຽງຈັນ

ເລກທີ 015 /ຄປພ.ວຈ
ວັນທີ 01 ທັນວາ 2023

# ຄຳແນະນຳ
## ກ່ຽວກັບ ການສ້າງຂະບວນການ
## ເພື່ອກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ

ເຖິງ: ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ ບັນດາພະແນກການ, ອົງການ, ກົມກອງ, ລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ ແລະ ເລຂາພັກເມືອງ ທົ່ວແຂວງວຽງຈັນ.

ເລື່ອງ: ການສ້າງຂະບວນການເພື່ອກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

- ອີງຕາມ ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄຈສພ, ລົງວັນທີ 8 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ.
- ອີງຕາມ ຄຳແນະນຳ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍ ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ.
- ອີງຕາມ ຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 264/ຄອສພ, ລົງວັນທີ 06 ພະຈິກ 2023 ກ່ຽວກັບການສ້າງຂະບວນການເພື່ອກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມ ໜັງສືສະເໜີ ຂອງຄະນະໂຄສະນາອົບຮົມແຂວງ ສະບັບເລກທີ 347/ຄອຮ ຂຈ ລົງວັນທີ 21 ພະຈິກ 2023.

ຄະນະປະຈຳພັກແຂວງວຽງຈັນ ອອກຄຳແນະນຳເພື່ອສ້າງຂະບວນການດັ່ງນີ້:

**I. ຈຸດປະສົງ, ລະດັບຄາດໝາຍ.**

1). ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ກ່ຽວກັບ ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ໂດຍສະເພາະແມ່ນວຽກງານຂະບວນການ ໃຫ້ເປັນຂະບວນການຟົດຟື້ນ, ກວ້າງຂວາງ, ຕໍ່ເນື່ອງ ແລະ ມີຫຼາຍຮູບຫຼາຍສີ ໂດຍຕິດພັນກັບການຊຸກຍູ້ການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ ຢູ່ບັນດາພະແນກການ, ອົງການ, ກົມກອງ ແລະ ເມືອງໃຫ້ສຳເລັດຜົນ.

2). ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນ ກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ດຳເນີນໄປຢ່າງຖືກຕ້ອງຕາມກົດລະບຽບ ຂອງພັກ ໂດຍຖືເອົາການສ້າງຂະບວນການ ເປັນການສ້າງຄວາມຮັບຮູ້, ເຂົ້າໃຈ



สแกนด้วย CamScanner

ຢ່າງເລິກເຊິ່ງໃຫ້ແກ່ສະມາຊິກພັກ, ພະນັກງານຕໍ່ຄວາມໝາຍສຳຄັນ ຂອງກອງປະຊຸມໃຫຍ່ຂອງພັກຂັ້ນຂອງຕົນ ທັງເປັນການຝຶກຝົນຫຼໍ່ຫຼອມຕົນເອງ ແລະ ແຂ່ງຂັນກັນສ້າງຜົນງານ ດ້ວຍຄວາມເປັນແບບຢ່າງ ແລະ ຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານ.

3). ເພື່ອຍູ້ແຮງການເຄື່ອນໄຫວວຽກງານຮອບດ້ານ ໃນທົ່ວອົງຄະນະພັກ, ປຸກລະດົມສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ພັດທະນາທ້ອງຖິ່ນ ແລະ ຂະແໜງການຕົນ ໃຫ້ກາຍເປັນຂະບວນການກ້ວາງຂວາງຟົດຟື້ນ, ຕໍ່ເນື່ອງ ໂດຍຜ່ານຂະບວນການດັ່ງກ່າວ ໃຫ້ສາມາດສ້າງໄດ້ກົມກອງ, ບຸກຄົນດີເດັ່ນ ໃນທຸກຂົງເຂດວຽກງານໃນທົ່ວແຂວງ.

**II. ທັດສະນະຊີ້ນຳ ຂອງພັກ ຕໍ່ກັບການສ້າງຂະບວນການ.**

1). ພັກເຮົາຍາມໃດກໍຖືວ່າ ການປ່ຽນແປງໃໝ່ແມ່ນພາລະກັດປະຕິວັດ ອັນເລິກເຊິ່ງ ທີ່ຕ້ອງດຳເນີນການຢ່າງຍາວນານ ແລະ ຕໍ່ເນື່ອງ; ສະນັ້ນ ຈຶ່ງຕ້ອງກຳແໜ້ນທັດສະນະຍຶດໝັ້ນອັນທີ່ເປັນຫຼັກການ, ທັງປະດິດສ້າງ, ຕໍ່ຍອດ, ເສີມຂະຫຍາຍ ແລະ ບຸກທະລຸຢ່າງແຂງແຮງ.

2). ສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໂດຍນຳໃຊ້ບັນດາຮູບການວິທີການ, ມາດຕະການ ແລະ ຂັ້ນຕອນທີ່ເໝາະສົມ, ບໍ່ອັດຕະວິໄສ, ບໍ່ສ້າງບັນຫາທີ່ອາດກໍ່ໃຫ້ເກີດມີຄວາມບໍ່ສະຫງົບ ພາຍໃນພັກ ແລະ ສັງຄົມ; ຕ້ອງຮຽນຮູ້-ຮັບເອົາອັນໃໝ່ ຢ່າງມີການເລືອກເຟັ້ນ ແລະ ປະດິດສ້າງ, ຕ້ານ ແລະ ແກ້ໄຂແນວຄິດຮັກສາເດີມ, ອຶດອາດຊັກຊ້າ, ບໍ່ຍອມປ່ຽນແປງ.

3). ຍົກສູງນ້ຳໃຈຮັກຊາດ ຕິດພັນກັບການຮັກລະບອບໃໝ່, ປັນຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ທັງເພີ່ມທະວີຄວາມສາມັກຄີເປັນເອກະພາບລະດັບສູງ ທາງດ້ານການເມືອງ, ດ້ານແນວຄິດ ແລະ ດ້ານການຈັດຕັ້ງ; ປະຕິບັດລະບຽບວິໄນຢ່າງເຂັ້ມງວດ ແລະ ເຮັດໃຫ້ກາຍເປັນວັດທະນະທຳການເມືອງໃໝ່ ຂອງພັກເຮົາ.

4). ຍູ້ແຮງການປ່ຽນແປງໃໝ່ທາງດ້ານເສດຖະກິດ-ການເງິນ, ສ້າງເສດຖະກິດແບບເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ຮັບປະກັນຄວາມສົມສ່ວນລະຫວ່າງ ການພັດທະນາເສດຖະກິດກັບການພັດທະນາສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

5). ຕ້ອງປ່ຽນແປງໃໝ່ແບບແຜນນຳພາ ຂອງພັກ ແລະ ລະບົບການປົກຄອງໃຫ້ຖືກຕ້ອງຕາມຫຼັກວິທະຍາສາດ, ສອດຄ່ອງກັບຈຸດພິເສດ ແລະ ສະພາບຄວາມເປັນຈິງ ຂອງປະເທດເຮົາ; ເຄົາລົບຢ່າງເຂັ້ມງວດ ອັນໃດຄືບົດບາດການນຳພາ ຂອງພັກ ແລະ ອັນໃດຄືບົດບາດການຄຸ້ມຄອງ-ບໍລິຫານ ຂອງລັດ.

6). ແກ້ໄຂບັນຫາຄົນ ແລະ ການເລືອກເຟັ້ນຄົນໃຫ້ຖືກຕ້ອງ, ເດັດດ່ຽວແກ້ໄຂພະຍາດອາຍາສິດ, ທ້ອງຖິ່ນ, ຈຸ້ມເຈື້ອເຊື້ອສາຍ, ພັກພວກ ເພື່ອຜົນປະໂຫຍດໃນໜ້າທີ່ວຽກງານ.

7). ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດທີ່ປົກຄອງດ້ວຍກົດໝາຍ ໂດຍພາຍໃຕ້ການນຳພາ ຂອງພັກ.



สแกนด้วย CamScanner

8). ສ້າງຮາກຖານພັກໃຫ້ເຂັ້ມແຂງ,ໜັກແໜ້ນ, ເປັນກຳລັງແຮງໃຫ້ແກ່ການຂັບເຄື່ອນ ຂອງລະບົບການເມືອງຢູ່ແຕ່ລະຂັ້ນ; ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນ, ສ້າງເງື່ອນໄຂໃຫ້ປະຊາຊົນ ເຂົ້າຮ່ວມການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດປະຊາຊົນຮູ້, ປະຊາຊົນປຶກສາຫາລື, ປະຊາຊົນເຮັດ, ປະຊາຊົນຕິດຕາມ, ກວດກາ ແລະ ປະຊາຊົນຊົມໃຊ້ໝາກຜົນ.

9). ເພີ່ມທະວີການນຳພາເດັດຂາດ, ໂດຍກົງ, ຮອບດ້ານ ຂອງພັກ ຕໍ່ກຳລັງປະກອບອາວຸດປະຕິວັດ ເພື່ອໃຫ້ເປັນກຳລັງທີ່ປອດໃສ, ເຂັ້ມແຂງ, ໜັກແໜ້ນ, ມີແບບແຜນ ແລະ ທັນສະໄໝ ຕິດພັນກັບການປະຕິບັດ ແນວທາງການຕ່າງປະເທດ ໃຫ້ສອດຄ່ອງ ແລະ ມີໄຫວພິບ ເພື່ອຮັບປະກັນຄວາມໝັ້ນຄົງ ກໍຄືຜົນປະໂຫຍດ ຂອງຊາດ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງຜັນຂະຫຍາຍ ທັດສະນະຊີ້ນຳດັ່ງກ່າວ ໂດຍຜ່ານຂະບວນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກນີ້ ຄະນະພັກແຕ່ລະຂັ້ນຕ້ອງເປັນເຈົ້າການນຳເອົາບັນດາເນື້ອໃນ ທັດສະນະຊີ້ນຳ ຂອງພັກເປັນບ່ອນອີງໃນການ ກຳນົດຄາດໝາຍລວມ ຂອງການນຳພາສ້າງຂະບວນການໂດຍການເຂົ້າຮ່ວມ ຂອງສະມາຊິກພັກ ພະນັກງານ, ທະຫານ, ຕຳຫຼວດ ຢ່າງທົ່ວເຖິງ ພ້ອມທັງລະດົມທຸກກຳລັງແຮງ ຂອງສັງຄົມເຂົ້າຮ່ວມ ບົນຈິດໃຈ ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

**III. ເນື້ອໃນແຂ່ງຂັນສ້າງຂະບວນການ.**

ເພື່ອຮັບປະກັນທາງດ້ານເນື້ອໃນ, ຮູບການ ແລະ ວິທີການ ໃນການແຂ່ງຂັນສ້າງຂະບວນການແນໃສ່ໃຫ້ກາຍເປັນການສ້າງເງື່ອນໄຂໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຄະນະພັກ ຂັ້ນຂອງຕົນ ໃຫ້ມີບັນຍາກາດຟົດຟື້ນ, ຕໍ່ເນື່ອງ ແລະ ຕິດພັນກັບການປັບປຸງປົວແປງພັກໃຫ້ມີຄວາມ ເຂັ້ມແຂງຢ່າງແທ້ຈິງນັ້ນ ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ຊຸກຍູ້ ແລະ ນຳພາປະຕິບັດ ບັນດາເນື້ອໃນ ແຂ່ງຂັນດັ່ງນີ້:

1). ຍູ້ແຮງຂະບວນການສຶກສາອົບຮົມການເມືອງ-ແນວຄິດ ດ້ວຍຫຼາຍຮູບການ, ຫຼາຍວິທີ, ແທດເໝາະກັບແຕ່ລະເປົ້າໝາຍ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ໃນວຽກງານການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ ຢູ່ໃນຂະແໜງການຕົນ ໃຫ້ມີຄຸນນະພາບໃໝ່.

2). ເອົາໃຈໃສ່ຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຮັບປະກັນເຮັດໃຫ້ທ້ອງຖິ່ນ, ຮາກຖານ, ຂະແໜງການ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ ເພື່ອສ້າງເງື່ອນໄຂ ສະດວກໃຫ້ແກ່ການປະຕິບັດໜ້າທີ່ວຽກງານ ຂອງພະນັກງານ.

3). ເອົາໃຈໃສ່ຕໍ່ການກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຮັບປະກັນດ້ານຄຸນນະພາບ, ສ້າງໃຫ້ມີສະມາຊິກພັກດີເດັ່ນ ແລະ ເປັນແບບຢ່າງນຳໜ້າໃຫ້ແກ່ມະຫາຊົນ.

4). ເອົາໃຈໃສ່ບຳລຸງ-ກໍ່ສ້າງພະນັກງານ ທາງດ້ານທິດສະດີ ຕິດພັນກັບພຶດຕິກຳຕົວຈິງ, ຫັນພະນັກງານໜຸ່ມແໜ້ນ ລົງກໍ່ສ້າງຮາກຖານເພື່ອຮັບປະກັນ ເຮັດໃຫ້ພະນັກງານ, ສະມາຊິກພັກມີຄວາມຮູ້, ຄວາມສາມາດ, ມີບົດຮຽນ, ປະສົບການ, ມີຄຸນທາດການເມືອງໜັກແໜ້ນ ແລະ ມີມາດຖານ, ເງື່ອນໄຂເພື່ອສືບທອດປ່ຽນແທນຢູ່ຄະນະພັກຂັ້ນຂອງຕົນ.



สแกนด้วย CamScanner

5). ຊຸກຍູ້ການປະຕິບັດວຽກງານຮອບດ້ານ ຢູ່ຂະແໜງການຂອງຕົນ, ຍູ້ແຮງຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ຕິດພັນກັບວຽກງານ 3 ສ້າງ, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ປະຕິບັດບັນດາຄຳຂວັນ, ຂໍ້ແຂ່ງຂັນ ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ໃຫ້ເປັນຮູບປະທຳຕົວຈິງ.

6). ເອົາໃຈໃສ່ປັບປຸງກົນໄກບໍລິຫານລັດ ແລະ ຂອດການປະສານງານ ຢູ່ໃນຂະແໜງການຕົນ ໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ, ສາມາດກວດສອບໄດ້ ແລະ ທັນເປັນມືອາຊີບ ເທື່ອລະກ້າວ.

7). ຍູ້ແຮງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ໂດຍສະເພາະແມ່ນບັນດາຄາດໝາຍ ທີ່ໄດ້ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ ທີ່ປະຕິບັດຍັງບໍ່ທັນສຳເລັດຈະຕ້ອງສູ້ຊົນປະຕິບັດໃຫ້ສຳເລັດ.

8). ເອົາໃຈໃສ່ຊຸກຍູ້ການສ້າງເສດຖະກິດຄອບຄົວ, ຍົກລະດັບຄຸນນະພາບຊີວິດການເປັນຢູ່ ຂອງສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ດ້ວຍການຜະລິດກະສິກຳ ເພື່ອຫຼຸດຜ່ອນລາຍຈ່າຍ ແລະ ຜະລິດເປັນສິນຄ້າ ສ້າງລາຍຮັບເຂົ້າຄອບຄົວບົນຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ຍູ້ແຮງຂະບວນການຜະລິດເປັນສິນຄ້າສົ່ງອອກ ເພື່ອທົດແທນການນຳເຂົ້າ, ສ້າງການຫັນປ່ຽນການພັດທະນາເສດຖະກິດ-ສັງຄົມໃຫ້ໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ.

9). ສ້າງຂະບວນການແຂ່ງຂັນ ສິລະປະວັນນະຄະດີ, ກິລາແບບມວນຊົນໃຫ້ມີບັນຍາກາດຟົດຟື້ນ, ມ່ວນຊື່ນ ແລະ ໃຫ້ກາຍເປັນຂະບວນການ ຂອງມະຫາຊົນຢ່າງກວ້າງຂວາງ, ໄປຄຽງຄູ່ກັບການອອກແຮງງານ, ອະນາໄມ, ປະດັບປະດາສະຖານທີ່ໃຫ້ມີຄວາມສະອາດ, ຈົບງາມບົນພື້ນຖານຄວາມປະຢັດ.

**IV. ວິທີຈັດຕັ້ງປະຕິບັດ.**

1). ໃຫ້ຄະນະພັກແຕ່ລະຂັ້ນ ຈັດຕັ້ງເຊື່ອມຊຶມ ຄຳແນະນຳສະບັບນີ້ໃຫ້ແກ່ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຢ່າງເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງ ພ້ອມທັງນຳພາ, ຊຸກຍູ້ການສ້າງແຜນການເຄື່ອນໄຫວ ສ້າງຂະບວນການໃຫ້ຟົດຟື້ນ, ຕໍ່ເນື່ອງ ດ້ວຍຮູບການ ແລະ ວິທີການຕ່າງໆ ໂດຍອີງໃສ່ເງື່ອນໄຂ, ຄວາມສາມາດຕົວຈິງ ຂອງຂະແໜງການ ແລະ ທ້ອງຖິ່ນຮາກຖານຕົນ.

2). ການສ້າງແຜນການເຄື່ອນໄຫວສ້າງຂະບວນການ ຂອງບັນດາຂະແໜງການ ນັບແຕ່ຂັ້ນແຂວງ, ເມືອງ, ຮາກຖານ ໃຫ້ອີງໃສ່ບັນດາເນື້ອໃນຂໍ້ແຂ່ງຂັນການສ້າງຂະບວນການ ທີ່ກຳນົດອອກຢູ່ ໃນຄຳແນະນຳສະບັບນີ້ ເປັນພື້ນຖານ ໃນການກຳນົດເນື້ອໃນ ແລະ ເປົ້າໝາຍໃນການຈັດຕັ້ງປະຕິບັດ; ໃນນີ້ ໃຫ້ເອົາໃຈໃສ່ບາງເນື້ອໃນສຳຄັນດັ່ງນີ້:

- ການສຶກສາອົບຮົມການເມືອງ-ແນວຄິດໃຫ້ອີງໃສ່ ຄຳແນະນຳ ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ ສະບັບເລກທີ 328/ຄອຮ ຂຈ, ລົງວັນທີ 9 ພະຈິກ 2023 ກ່ຽວກັບ ການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານຫຼັກແຫຼ່ງເພື່ອດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.



สแกนด้วย CamScanner

- ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນໃຫ້ຍູ້ແຮງຄວາມເປັນເຈົ້າການ ຂອງສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ເພື່ອຮັບປະກັນໃຫ້ຂະແໜງການ ແລະ ທ້ອງຖິ່ນຮາກຖານຕົນມີຄວາມສະຫງົບ, ມີຄວາມເປັນຮຽບຮ້ອຍ, ເດັດຂາດບໍ່ໃຫ້ປະກົດການຫຍໍ້ທໍ້ຕ່າງໆເກີດຂຶ້ນຢູ່ໃນອົງຄະນະພັກຕົນ; ພ້ອມດຽວກັນນີ້ ກໍໃຫ້ດຳເນີນໄປຄວບຄູ່ກັບການສ້າງຂະບວນການວັນສຳຄັນຂອງຊາດ, ຂອງພັກ ແລະ ຂອງຜູ້ນຳເຊັ່ນ: ວັນຊາດ ທີ 2 ທັນວາ ຄົບຮອບ 48 ປີ, ວັນສ້າງຕັ້ງກອງທັບຄົບຮອບ 75 ປີ, ວັນຄ້າຍ ວັນເກີດ ປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ ແລະ ວັນສຳຄັນອື່ນໆ.

- ຖືເອົາການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນຂະບວນການແຂ່ງຂັນທາງດ້ານປະສິດທິພາບຂອງສະມາຊິກພັກ ໂດຍຊອກໃຫ້ເຫັນສະມາຊິກພັກທີ່ດີເດັ່ນ ແລະ ມີຄວາມເປັນແບບຢ່າງນຳໜ້າໃຫ້ແກ່ມະຫາຊົນທີ່ແທ້ຈິງ ພ້ອມທັງປະຕິບັດນະໂຍບາຍທີ່ເໝາະສົມ.

- ແຕ່ລະພະແນກການ, ອົງການ, ກົມກອງ, ບັນດາເມືອງ ແລະ ຮາກຖານ ໃຫ້ຄົ້ນຄວ້າພິຈາລະນາຄັດເລືອກເອົາພະນັກງານໜຸ່ມແໜ້ນ ລົງກໍ່ສ້າງຮາກຖານ ເພື່ອກໍ່ສ້າງພະນັກງານສືບທອດໃຫ້ຖືກຕ້ອງຕາມມາດຖານ, ທັງເປັນການເປີດໂອກາດ ໃຫ້ພະນັກງານໜຸ່ມໄດ້ຝຶກຝົນຫຼໍ່ຫຼອມຕົນເອງ ແລະ ສະແດງຄວາມສາມາດໃນວຽກງານຕົວຈິງ

- ຍູ້ແຮງການປະຕິບັດໜ້າທີ່ວຽກງານຂອງສະມາຊິກພັກ, ພະນັກງານ ໂດຍຖືເອົາການແຂ່ງຂັນ ຮັກຊາດ ແລະ ພັດທະນາ, ຕິດພັນກັບວຽກງານ 3 ສ້າງ ແລະ ການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ກໍຄືການປະຕິບັດຄຳຂວັນ, ຂໍ້ແຂ່ງຂັນຂອງແຕ່ລະພະແນກການ, ອົງການ, ກົມກອງ ແລະ ເມືອງ ເປັນເນື້ອໃນໜຶ່ງຂອງຂະບວນການ.

- ປັບປຸງກົນໄກການບໍລິຫານ-ການຄຸ້ມຄອງລັດໃຫ້ມີຄວາມກົມກຽວ, ສອດຄ່ອງ, ວ່ອງໄວ, ທັນ ສະໄໝ ແລະ ສຸມໃສ່ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນບັນດາຄາດໝາຍທີ່ບໍ່ທັນບັນລຸ.

- ຊຸກຍູ້ໃຫ້ພະນັກງານ, ສະມາຊິກພັກທີ່ຢູ່ໃນຄວາມຮັບຜິດຊອບໃຫ້ເອົາໃຈໃສ່ຕໍ່ການສ້າງເສດຖະ ກິດຄອບຄົວ, ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ ດ້ວຍຈິດໃຈ ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

- ການສ້າງຂະບວນການ ໃຫ້ມີຫຼາຍຮູບການ, ຫຼາຍວິທີ ແລະ ປະຕິບັດຢ່າງຕໍ່ເນື່ອງນັ້ນ ຕ້ອງດຳເນີນ ໄປຢ່າງມີແຜນການ, ມີການນຳພາ ແລະ ສະແດງອອກດ້ວຍພຶດຕິກຳຕົວຈິງ ແລະ ກາຍເປັນຂະບວນການ ຂອງມະຫາຊົນຢ່າງກວ້າງຂວາງ.

ດັ່ງນັ້ນ, ຈຶ່ງແນະນຳມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ./

**ຄະນະປະຈຳພັກແຂວງວຽງຈັນ**

ຄຳພັນ ສິດທິດຳພາ



สแกนด้วย CamScanner